# ໂຮງຮຽນວັນອາທິດ

**ວັນອາທິດ ທີ 5 ຕຸລາ 2008 (10-5-2008)**

---

## ທຸກຄົນຕົກຢູ່ໃນຄວາມບາບ

**ຂໍ້ພຣະຄັມພີໃນບົດຮຽນ:** ໂຣມ 1:18-25,28-32,3:9-10

**ບົດຮຽນນີ້ສາມາດສະທ້ອນຕໍ່ຊີວິດທ່ານໄດ້ຢ່າງໃດ:**

ຕົວທ່ານແລະທຸກຄົນເປັນຄົນຜິດບາບ, ແມ່ນຈິດວິນຍານທີ່ຫຼົງຫາຍ, ບົດຮຽນນີ້ຈະຊ່ວຍໃຫ້ທ່ານຄົ້ນພົບວ່າ ທຸກຄົນບໍ່ເປັນຄົນຊອບທັມມາແຕ່ກຳເນີດແລະນັບຖືພຣະເຈົ້າຢ່າງແທ້ຈິງ.

**ບົດຮຽນນີ້ເວົ້າກ່ຽວກັບຫຍັງ:**

ບົດຮຽນນີ້ທ່ານອາຈານໂປໂລໄດ້ສອນວ່າມະນຸດເຮົາແມ່ນຕົກຢູ່ໃນຄວາມບາບໂດຍກຳເນີດ. ຄວາມບາບໄດ້ຊັກຈູງແນວຄວາມຄິດ, ນິສັຍ, ການຕັດສິນໃຈ, ແລະການກະທຳຂອງຄົນທີ່ປະຕິເສດການນັບຖືພຣະເຈົ້າຢ່າງຖືກຕ້ອງ, ແລະໃຫ້ການສນັບສນຸນອູ້ມຊູກັບກຸ່ມຄົນທີ່ປະພຶດຜິດສິນທັມ.

**ເປັນຫຍັງບົດຮຽນນີ້ຈຶ່ງມີຄວາມສຳຄັນ:**

" ທຸກໆຄົນເປັນຄົນຜິດບາບແຕ່ມີກຸ່ມຄົນຈຳນວນນຶ່ງອາດມີຄວາມຮູ້ສຶກວ່າ, ພວກເຂົາມີຄວາມຄິດເຫັນສ່ວນຕົວໃນການປະຕິບັດຕໍ່ພຣະເຈົ້າ. ຫາກຄິດໃນທຳນອງນີ້ພວກເຂົາແມ່ນຄິດຖືກຕ້ອງແລ້ວ. ມີຄົນແກ່ຈຳນວນນຶ່ງຄິດໃນທຳນອງນີ້ຖ້າຫາກວ່າຄົນເຮົານັບຖືກສາສນາຢ່າງຖືກຕ້ອງ. ຫຼືບໍ່ກໍເປັນຄົນດີເປັນຄົນທີ່ຈິງໃຈຕົງໄປຕົງມາແນວນັ້ນພວກເຂົາກໍເຫັນວ່າຖືກຕ້ອງແລ້ວສຳລັບພຣະເຈົ້າ. ບົດຮຽນນີ້ໄດ້ເວົ້າທາງກົງກັນຂ້າມເປັນຕົ້ນແນວຄວາມຄິດປະຈຸບັນແລະຄວາມໄວ້ວາງໃຈກັບພຣະທັມຄຳສອນໃນພຣະຄັມພີວ່າທຸກຄົນແມ່ນຕົກຢູ່ໃນຄວາມບາບ. ບໍ່ວ່າຜູ້ໃດຈະເປັນຄົນຊົ່ວ ຫຼືຄົນດີພວກເຂົາກໍເປັນຄົນບາບທັງນັ້ນ.

"Jonh" ໄດ້ເວົ້າກັບ " Bill "ວ່າພວກເຮົາແມ່ນເພື່ອນສະຫາຍກັນ. ຂ້ອຍຕ້ອງການທີ່ຈະເວົ້າກັບເຈົ້າກ່ຽວກັບຄວາມລອດພົ້ນ. * Bill ໄດ້ຖາມJonh* ລອດພົ້ນຈາກອັນໃດ? ຂ້ອຍເປັນຄົນດີ,ເປັນຄົນຂຍັນໃນການທຳງານ, ຂ້ອຍກໍໄປໂບດ. ຂ້ອຍເຫັນວ່າເປັນການດີສົມຄວນແລ້ວ. ນັ້ນແມ່ນເປັນຂໍ້ບົກຜ່ອງຂອງ Bill, ລາວພຽງແຕ່ຄົນດີ ເປັນຄົນ ດັ່ງໃນສັງຄົມ. ການຍອມຮັບໃນພຶດຕິກຳອັນດີບໍ່ໄດ້ມີຄວາມໝາຍອັນໃດເລີຍ. ເ ພາະບໍ່ແມ່ນມາດຕະຖານຂອງພຣະເຈົ້າ. Jonh ຄວາມຈະຊ່ວຍ Bill ໃຫ້ແນ່ໃຈໃນສິ່ງທີ່ລາວຕ້ອງການຈາກພຣະອົງພຣະເຢຊູຄຣິສແນວໃດ ? ບາງທີ່ຄົນເຮົາເບິ່ງເຫັນຕົວເອງເປັນຄົນບາບແຕ່ກັບປະຕິເສດ ເຫດຜົນກໍມີຢູ່ວ່າພວກເຂົາບໍ່ຍິນຍອມທີ່ຈະມອບຊີວິດຂອງເຂົາໄວ້ກັບອົງພຣະເຢຊູຄຣິສ. ພຣະເຈົ້າອົງຊົງເປັນພຣະເຈົ້າແລະພຣະຜູ້ໂຜດໃຫ້ພົ້ນ.

ບົດຮຽນນີ້ຈະຊີ້ໃຫ້ທ່ານເຂົ້າໃຈວ່າທຸກຄົນເປັນຄົນບາບນັ້ນໝາຍຄວາມວ່າແນວໃດ. ແລະຈະຊ່ວຍໃຫ້ທ່ານຄົ້ນພົບວ່າດ້ວຍເຫດຜົນໃດທຸກຄົນແມ່ນເປັນຄົນຫລົງຫາຍແລະຕ້ອງການຄວາມລອດພົ້ນ.

1. **ຜູ້ຕໍ່ສູ້ກັບຄວາມຈິງຂອງພຣະເຈົ້າ:** ໂຣມ 1:18-20

ໃນເວລາເດີນທາງປ່າວປະກາດຢູ່ ຣັສເຊັຍ. ຂ້ອຍໄດ້ໄປຢ້ຽມຢາມພະຣາຊວັງແຄຣມລິນ ໃນຣັສເຊັຍ, ຄົນທ່ຽວໄດ້ສະແດງໃຫ້ຂ້ອຍຮູ້ເຫັນວິຫານສອງສາມຫລັງທີ່ເປັນບອນເກັບສົບຂອງຈັກກະພັດຣັສເຊັຍ. ຂ້ອຍໄດ້ຖາມວ່າຄັນຊັ້ນຈິດວິນຍານຂອງພວກເພິ່ນເດຢູ່ໃສ.ນາງຕອບວ່າ "ນັກບິນຍານອາວະກາດຂອງພວກເຮົາຫາກໍ່ກັບມາຈາກຫ້ວງອາວະກາດໄດ້ເວົ້າວ່າພວກເພິ່ນບໍ່ໄດ້ພົບເຫັນສິ່ງໃດເລີຍເປັນຫລັກຖານຂອງພຣະເຈົ້າ." ຂ້ອຍໄດ້ເວົ້າຍ້ອນໄປວ່າ" ມັນໜ້າຕື່ນເຕັ້ນທີ່ສຸດ. ນັກບິນອາວະກາດຂອງພວກເຮົາໄດ້ພົບເຫັນໂລກຈັກກະວານຈາກຫ້ວງອາວະກາດ

ແລະຄວາມມະຫັສຈັນຂອງການຊົງສ້າງຂອງພຣະເຈົ້າ. ໃນທາງໃດແດ່ທີ່ທ່ານໄດ້ພົບເຫັນຫຼັກຖານການຊົງສ້າງຂອງພຣະເຈົ້າອົງຊົງພຣະຊົນເປັນຢູ່? ການຊົງສ້າງແມ່ນການເປີດເຜີຍຂອງອົງພຣະຜູ້ເປັນເຈົ້າ. ເຖິງແມ່ນວ່າພວກເຮົາສາມາດເຫັນຫຼັກຖານຂອງພຣະອົງດ້ວຍການຊົງສ້າງ, ພຣະເຈົ້າຊົງສຳແດງພຣະອົງເອງໂດຍທາງທັມມະຊາດຜ່ານທາງພຣະຄຳຂອງພຣະອົງ. ສຸດທ້າຍ ຜ່ານທາງພຣະບຸດຂອງພຣະເຈົ້າ, ດັ່ງນັ້ນຫຼັກຖານທັງໝົດນີ້ແມ່ນການຊົງບອກງການຊົງພຣະຊົນຂອງພຣະເຈົ້າ. ບໍ່ມີໃຜຈັກຄົນນຶ່ງສາມາດປະເສດຫຼືຂໍ້ແກ້ຕົວທີ່ຈະບໍ່ເຊື່ອໃນພຣະອົງຄົນທີ່ຕໍ່ສູ້ກັບຄວາມຈິງ ເພາະວ່າພວກເຂົາເປັນຄົນຜິດບາບ. ໃນຖານະຂອງຜູ້ຊົງສ້າງ, ພຣະເຈົ້າມີສິດທິຖືກຕ້ອງທີ່ຈະຕັດສິນໃຈບອກພວກເຮົາຄວນຈະດຳລົງຊີວິດຢ່າງໃດ? ຜູ້ຄົນຈຳນວນນຶ່ງປະຕິເສດຄວາມຈິງຂອງພຣະເຈົ້າອົງຊົງພຣະຊົນຢູ່.ປະຕິເສດການໃຫ້ກຽດ, ການນະມັສການແລະການຍອມເຊື່ອຟັງພຣະເຈົ້າ.

ຜົນຮັບຂອງການປະຕິເສດໃນສາຍສຳພັນຂອງພຣະເຈົ້າແລະຄວາມບໍ່ຖືກຕ້ອງ. ຄຳເວົ້າທີ່ວ່າ ການມີສາຍສຳພັນກັບພຣະເຈົ້ານັ້ນແມ່ນການພິຈາລະນາແລະເປີດເຜີຍຂອງພຣະເຈົ້າ. ຄຳເວົ້າທີ່ວ່າ ຄວາມບໍ່ຖືກຕ້ອງນັ້ນແມ່ນການພັນລະນາຂອງຄົນຜູ້ທີ່ບໍ່ນັບຖືກົດພຣະບັນຍັດຂອງພຣະເຈົ້າ, ມະນຸດເຮົາຕົກຢູ່ໃນການພິໂຣດຂອງພຣະເຈົ້າກໍເພາະວ່າພວກເຮົາບໍ່ຍອມຮັບເອົາການຕິດຕາມທາງຂອງພຣະເຈົ້າ. ຄົນເຮົາທຸກມື້ນີ້ມີຄວາມເຊື່ອແລະໝັ້ນໃຈໃນພຣະເຈົ້າຢູ່ບໍ່? ດ້ວຍສາເຫດອັນໃດ? ພຣະພິໂຣດຂອງພຣະເຈົ້າຈຶ່ງບໍ່ເກີດຂຶ້ນໃຫ້ເຫັນທັນທີທັນດ່ວນ.ແລະບໍ່ແມ່ນມີຂຶ້ນດ້ວຍຄວາມໂກດຮ້າຍ,ແຕ່ປະກົດເປັນການທຳລາຍຄວາມບາບຂອງມະນຸດ. ພວກເຂົາບໍ່ມີຄວາມແກ້ຕົວໃດໆ ເພາະເຂົາຮູ້ຈັກດີແລະຍັງດຳຫລົງໄປໃນທາງທີ່ຜິດ,ຕໍ່ເຫດການທີ່ເກີດຂຶ້ນພານທາງພຣະອົງ. ພວກເຂົາສາມາດສັງເກດໄດ້ຢ່າງຈະແຈ້ງເຖິງຣິດທານຸພາບອັນຖາວອນແລະຄວາມເປັນຂອງພຣະອົງ. ໂດຍຣິດທານຸພາບຂອງພຣະອົງທ່ານສາມາດເຫັນ ເຖິງການຊົງສ້າງຢ່າງໃດ ? ປະໂຍດທີ່ວ່າສັງເກດໄດ້ເບິ່ງຄືວ່າເປັນຮູບພາບທີ່ປະກົດຂຶ້ນໃຫ້ເຫັນໃນຈິດຕະນາການ.ໃນຂະນະທີ່ເຮົາທຳຄວາມເຂົ້າໃຈຜ່ານໃນຈິດໃຈໃຫ້ລັກແນ່ ພວກເຮົາກໍຈະພົບເຫັນພຣະເຈົ້າອົງທ່ຽງແທ້ຕລອດເຖິງການຊົງສ້າງທີ່ປາກົດມີຂຶ້ນໃຫ້ເຫັນໃນໂລກ. ຄວາມເປັນອັມມະຕະຂອງພຣະອົງກໍປາກົດແຈ້ງໃຫ້ເຫັນເຖິງຣິດທານຸພາບຂອງພຣະອົງ. ໃນຄາວສຸດທ້າຍພຣະເຈົ້າກໍໄດ້ເປີດເຜີຍໃນໜັງສືເຫຼັ້ມສຸດທ້າຍ ແມ່ນພຣະເຢຊູຄຣິດ, ແລະໂດຍຜ່ານທາງຂອງພຣະອົງເທົ່ານັ້ນທີ່ຈະສາມາດຊ່ອຍໃຫ້ພວກເຂົາໄດ້ຮັບຄວາມ
ລອດພົ້ນບາບ.

**2. <u>ເຂົາຫັນໄປຫາພຣະເຈົ້າຂອງເຂົາເອງ</u>** ໂຣມ 1: 21-25

ເປັນຫຍັງຈຶ່ງມີບາງຄົນຫັນໄປຫາພຣະເຈົ້າທີ່ເຂົາສ້າງຂຶ້ນ. ການຮູ້ຈັກກັບພຣະເຈົ້າບໍ່ໄດ້ໝາຍຄວາມວ່າເຂົາປະຕິບັດຕາມນ້ຳພຣະທັຍຂອງພຣະອົງຢ່າງຖືກຕ້ອງ. ເຂົາມີຄວາມສລາດຮູ້ຈັກພຣະເຈົ້າແຕ່ເຂົາກັບປະຕິເສດພຣະອົງໂດຍບໍ່ໃຫ້ການຖວາຍພຣະກຽດຢ່າງທີ່ຖືກຕ້ອງ. ແທນທີ່ເຂົາຈະຍອມຮັບສະງ່າຣາສີຂອງພຣະເຈົ້າຜູ້ຊົງຕາຍບໍ່ເປັນ, ພວກເຂົາກັບຂາບໄຫວ້ທັມະຊາດ. ນະມັສການຮູບໂຄຣົບທີ່ພວກເຂົາສ້າງຂຶ້ນ, ກັບມະນຸດທີ່ຕາຍເປັນ, ກັບນົກ. ແລະພວກສັດເລືອຄານ. ເປັນຫຍັງ, ຍັງມີບາງຄົນໄຫວ້ນະມັສການສິ່ງທີ່ພວກເຂົາສ້າງຂຶ້ນດ້ວຍມືຂອງເຂົາເອງ? ບາງຄົນກໍຫັນໄປຂາບໄຫວ້ສິ່ງທີ່ເຂົາສ້າງຂຶ້ນເອງ.ໃນຂະນະບາງຄົນໄດ້ຢຸດເຊົາກັບການຂາບໄຫວ້ຮູບໂຄຣົບພວກເຂົາສຳພັດກັບໄປຂາບໄຫວ້ສິ່ງທີ່ເປັນທັມມະຊາດເໜືອນກວ່າພຣະເຈົ້າ. ແທນທີ່ຈະນະມັສການຂາບໄຫວ້ພຣະເຈົ້າຜູ້ຊົງສ້າງ. ພວກເຂົາພຽງແຕ່ສະແດງຄວາມໂງ່ເຂົາເບົາປັນຍາຂອງພວກເຂົາເອງ. ແມ່ນຫຍັງທີ່ເຮັດໃຫ້ໃນບາງຄົນຂາບໄຫວ້ທຳມະຊາດເໜືອກວ່າພຣະເຈົ້າຜູ້ຊົງສ້າງ? ອາຈານໂປໂລໄດ້ສົມທຽບຄວາມສລາດທີ່ມີມາທາງ ພຣະເຈົ້າກັບຄວາມສລາດຢ່າງທັມມະຊາດຂອງໂລກ.

ອາຈານໂປໂລໄດ້ເວົ້າເຖິງຄວາມໄຮ້ປໂຍດຂອງບຸກຄົນທີ່ບໍ່ເຊື່ອໃນພຣະເຈົ້າລຳດັບ . ອັນທີນຶ່ງພວກເຂົາປະຕິເສດພຣະສງ່າຣາສີຂອງພຣະເຈົ້າບໍ່ເທົ່ານັ້ນພວກເຂົາຍັງຮູ້ຈັກກ່ຽວກັບພຣະອົງ. ອັນນີ້ມັນສະແດງໃຫ້ເຫັນເຖິງບຸກຄົນທີ່ຮູ້ຈັກພຣະເຈົ້າໃນຂອບເຂດຈຳກັດ. ປາກົດການໄດ້ເກີດຈາກແນວຄິດສ່ວນຕົວຂອງເຂົາເອງ.

ອັນທີສອງ ພວກເຂົາປະຕິເສດຄວາມຮູ້ບຸນຄຸນຂອງການອວຍພຣະພອນຂອງພຣະເຈົ້າ.ບໍ່ເທົ່ານັ້ນພວກເຂົາໄດ້ເອົາພຣະສງ່າຣາສີຂອງພຣະເຈົ້າປ່ຽນມາເປັນຮູບປັ້ນແລະຄວາມຈິງຂອງພຣະເຈົ້າປ່ຽນມາເປັນຄວາມບໍ່ຈິງ. ໃນທີ່ສຸດພວກເຂົາກໍນະມັສການທັງບົວລະບັດສິ່ງທີ່ສ້າງຂຶ້ນແທນພຣະອົງຜູ້ຊົງສ້າງ ເມື່ອພວກເຂົາຫັນຫນີຈາກພຣະເຈົ້າພວກເຂົາເອົາສະງ່າຣາສີຂອງພຣະເຈົ້າປ່ຽນເປັນຮູບປັ້ນທີ່ເຂົາສ້າງຂຶ້ນແລະເຂົາເອົາຄວາມເປັນອັມມະຕະຂອງພຣະເຈົ້າມາເປັນຄວາມເສື່ອມໂຊມໄດ້. ນີ້ແມ່ນຄໍາກ່າວຂອງຜູ້ນໍາສາສນາທີ່ບໍ່ຈິງທີ່ບິດເບືອນຄວາມຈິງຂອງພຣະເຈົ້າເພື່ອໃຫ້ເຂົາມາປະຕິບັດຮັບໃຊ້ຕົນ. ເປັນຫຍັງພວກເຂົາຈຶ່ງປ່ອຍໃຫ້ຜູ້ນໍາສາສນາປອມເຂົ້າມາປົກຄອງຊີວິດຂອງເຂົາ ?

ມະນຸດມີເຫດຜົນທີ່ຈະເລືອກເອົາສິ່ງທີ່ດີກັບຕົນເອງ. ຄົນທີ່ບໍ່ເຊື່ອຄວາມຄິດຂອງເຂົາກາຍເປັນສິ່ງທີ່ເສັຍປໂຍດ, ໃຈທີ່ໂງ່ຂອງເຂົາກໍມືດມົວໄປແລະເຂົາກໍກາຍເປັນຄົນໂງ່ໄຮ້ປັນຍາ. ຄວາມອວດເກັ່ງປັນຍາຂອງເຂົາກໍກາຍມາເປັນປັນຍາທີ່ອ່ອນແອ່ ໃນທີ່ສຸດພຣະເຈົ້າກໍເອົາສິ່ງທີ່ເຂົາປາຖນາຄືນໃຫ້ກັບເຂົາ, ຄວາມມີຣາຄະຕັນຫາ. ພຣະເຈົ້າໃຫ້ເຂົາສິ່ງທີ່ ເຂົາຕ້ອງການ.ແມ່ນຫຍັງເປັນສິ່ງຜູກພັນຄວາມບາບກັບຜູ້ນໍາສາສນາບໍ່ ? ຣາຄະຕັນຫາອັນໜ້າອັບອາຍກໍປ່ຽນການສໍາພັນທີ່ຜິດທັມມະຊາດໄປ. ພວກເຂົາທໍາໃຫ້ສິ່ງໜ້າອັບອາຍທາງຮ່າງກາຍຕໍ່ກັນ, ການຂາດສິນທັມແລະຊີວິດຝ່າຍຈິດວິນຍານກໍຈະຖືກພິພາກສາຈາກພຣະເຈົ້າ. ອາຈານໂປໂລໄດ້ເວົ້າເຖິງການທີ່ພຣະເຈົ້າໄດ້ໃຫ້ເຂົາເຮັດຕາມຄວາມປາດຖນາຊົ່ວຫຼືຕາມຊອບໃຈ ຂອງເຂົາເຖິງສາມຄັ້ງ (ໂຣມ 1:24,26,28)ໃນຂໍ້ຄວາມເຫຼົ່ານີ້ໄດ້ແຍກໃຫ້ເຫັນວ່າຜູ້ນໍາທາງສາສນາທີ່ບໍ່ຈິງໄດ້ປັ້ນເຂົາໃຫ້ບິດເບືອນທຸກສິ່ງຕໍ່ເພື່ອນມະນຸດດ້ວຍກັນ. ໂດຍບໍ່ມີເຫດຜົນທຸກສິ່ງທີ່ເຂົາກະທໍາຊີ້ໃຫ້ເຫັນເຖິງຄວາມບາບຫຼືຄວາມຕາຍ. ນັ້ນກໍຄືຣາຄະຕັນຫາທີ່ພວກເຂົາມີຢູ່ກໍຄືຜິດແບບທັມະຊາດໄປ, ຊຶ່ງຜູ້ຊາຍກັບຜູ້ຊາຍ, ຜູ້ຍິງກັບຜູ້ຍິງ ( ໂຣມ 1:26-27 ) ໂດຍເປັນການນະມັສການພຣະເຈົ້າປອມຂອງເຂົາຊຶ່ງນໍາໄປໃນທາງທີ່ຜິດໂດຍສະເພາະການຜິດຊາຍຍິງ. ພວກຜູ້ຊາຍທີ່ໄດ້ເລີກການສໍາພັນກັບຜູ້ຍິງໂດຍທາງທັມະຊາດແລະຮີບຮ້ອນແຫ່ງໄຟຂອງຣາຄະຕັນຫາ. ກໍເພາະວ່າເຂົາໄດ້ປະຕິເສດພຣະເຈົ້າໃນຊີວິດຂອງເຂົາ. ພວກເຮົາກໍບໍ່ສົມຄວນທີ່ມອງຂ້າມແລະຕັດສິນເຂົາໂດຍເວົ້າວ່າ, " ເຂົາເປັນຄົນບາບພວກເຂົາກໍສົມຄວນແລ້ວທີ່ຈະຖືກການພິພາກສາຂອງພຣະເຈົ້າ " ຄວາມຈິງຖ້າເຮົາບໍ່ມີພຣະເຢຊູຄຣິດພວກເຮົາທຸກໆຄົນກໍເປັນຄົນບາບເໝືອນກັນ. ພວກເຮົາມີຄວາມຮັບຜິດຊອບທີ່ຈະຊ່ອຍບຸກຄົນທີ່ຫລົງຫາຍແລະອື່ນໆ. ສົມຄວນບໍ່ ? ຫຼືບໍ່ສົມຄວນ.

### 3. <u>ຄົນເຮົາມັກຢູ່ໃນຄວາມບາບ</u> : ໂຣມ 1:28-32

ບາງຄົນບໍ່ພຽງແຕ່ຄິດເທົ່ານັ້ນແລະຍັງໄດ້ລົງມືເຮັດຄວາມບາບ, ບໍ່ພຽງແຕ່ເທົ່ານັ້ນຍັງຊັກຊວນຄົນອື່ນເຮັດນໍາອີກ. ເປັນຫຍັງບາງຄົນຈຶ່ງຊັກຊວນຄົນໃຫ້ຮີບເຮັດບາບນໍາຕົນ ? ບັນຫາພື້ນຖານຂອງມະນຸດກໍແມ່ນເຂົາບໍ່ຮູ້ຈັກກັບພຣະເຈົ້າ.ເຫດສະນັ້ນພຣະເຈົ້າຈຶ່ງປະໃຫ້ເຂົາເຮັດຕາມຄວາມປາດຖນາຂອງເຂົາ, ມັນມີຄວາມໝາຍແນວໃດ? ທີ່ວ່າມີບາງຄົນຖືນໍາໄປສູ່ຄວາມບາບຂອງຕົນເອງ. ພວກເຂົາຍັງຈະສືບຕໍ່ທໍາຄວາມບາບຢູ່, ດັ່ງນັ້ນພຣະເຈົ້າຈຶ່ງຕອບສນອງຄວາມຢາກຂອງເຂົາ. ພ້ອມດ້ວຍຄວາມຫຍຸ້ງຢາກຂອງເຂົາທີ່ໄດ້ຮັບ.

ອາຈານໂປໂລຍັງໄດ້ເວົ້າເຖິງການມີຢູ່ຂອງເຂົາເຕັມລົ້ນດ້ວຍຄວາມອະທັມ. ຄວາມບໍ່ດີ. ຄວາມໂລບແລະຄວາມຊົ່ວຮ້າຍ.ເມື່ອມະນຸດປັດສະຈາກພຣະເຈົ້າແລ້ວຊີວິດຂອງເຂົາກໍເຕັມລົ້ນດ້ວຍສິ່ງອື່ນໆ. ຄວາມບາບຈະບໍ່ຢຸດຢັ້ງພຽງແຕ່ເທົ່ານີ້. ອາຈານໂປໂລຍັງໄດ້ເວົ້າອີກວ່າພວກເຂົາຍັງດໍາເນີນໃນເວລານີ້ຢູ່, ຕົວຢ່າງເຊັ່ນ: ນຶ່ງໃນເຈັດ. ການອິດສາຈາກການໃສ່ຮ້າຍປາຍສີກັນມັນກໍຮ່ວມເຂົ້າໃນຄວາມບາບທີ່ຕໍ່ສູ່ຜູ້ອື່ນ,ການຂົ່ມຄົນອື່ນຍໍຕົນເອງ.

ຕົວຢ່າງສອງໃນຫົກແມ່ນຄວາມບາບໃນການບໍ່ມີຄວາມສັມພັນກັບພຣະເຈົ້າ.ສິ່ງທີ່ພຣະເຈົ້າບໍ່ພໍພຣະທັຍຄືຄວາມອວດອົງຈອງຫອງ ພວກນີ້ໄດ້ທໍາຄວາມບາບອີກຢ່າງນຶ່ງ. ຄືການບໍ່ເຊື່ອຟັງພໍ່ແມ່ກໍເປັນການປະຕິເສດອໍານາດຂອງພຣະເຈົ້າໃນຊີວິດຂອງເຂົາ. ໃນທໍານອງໃດທີ່ວ່າການທີ່ບໍ່ຟັງພໍ່ແມ່ໄດ້ຊີ້ໃຫ້ເຫັນວ່າມີບັນຫາກັບພຣະເຈົ້າແນວໃດ? ຕົວຢ່າງສີ່ຂໍ້ສຸດທ້າຍແມ່ນບັນຫາບຸກຄະລິກສ່ວນຕົວ. ພວກເຂົາບໍ່ໄດ້ຄໍານຶງເຖິງສິ່ງໃດໝົດ( ຂາດຄວາມຮັບຜິດຊອບ ) ບໍ່ມີຄວາມໄວ້ວາງໃຈ ( ຜິດສັນຍາ ) ບໍ່ມີຄວາມຮັກແລະບໍ່ມີຄວາມເມດຕາ.

ເມື່ອຄົນເຮົາບໍ່ຍອມຮັບພຣະເຈົ້າ. ພວກເຂົາບໍ່ເຂົ້າໃຈວ່າເຂົາກຳລັງເຮັດຫຍັງຢູ່. ຜູ້ທີ່ຮູ້ຈັກພຣະເຈົ້າກໍຮູ້ວ່າເຂົາຈະຖືກລົງໂທດໃນການກະທຳຂອງເຂົາການລົງໂທດຂອງພຣະເຈົ້າກໍຍຸດຕິທັມເຂົາຈະຕ້ອງໄດ້ຮັບຄວາມຕາຍ. ຄ່າຈ້າງຂອງຄວາມຜິດບາບຄືຄວາມຕາຍ(ໂຣມ 6:23 ) ແລະພວກເຮົາທຸກຄົນເປັນຄົນຜິດບາບ(ໂຣມ 3:23 ). ໃນຄວາມຮູ້ສຶກຢ່າງນີ້ ຄົນເຮົາກໍຍັງດຳເນີນໃນການເຮັດຄວາມບາບແລະຊັກຊວນຄົນອື່ນອີກດ້ວຍ. ນິສັຍຢ່າງນີ້. ໄດ້ສະແດງໃຫ້ເຫັນວ່າເຂົາຍັງເຮັດບາບຢູ່. ດ້ວຍເຫດໃດເຂົາຈຶ່ງຊັກຊວນຄົນອື່ນໃຫ້ເຮັດບາບທັງໆທີ່ຮູ້ວ່າຜົນຂອງມັນຄືຄວາມຕາຍ ?

ຜູ້ທີ່ຊັກຊວນຄົນອື່ນໃຫ້ເຮັດຄວາມຊົ່ວຮ້າຍ ແມ່ນພະຍາຍາມຂຍາຍອານາຈັກຂອງມານ. ນີ້ແມ່ນການນຳເຮົາໄປສູ່ການທຳລາຍຄົນອື່ນນິສັຍແບບນີ້ແມ່ນສະແດງໃຫ້ເຮົາວ່າບຸ ກຄົນນັ້ນແມ່ນບໍ່ມີຄວາມລະອາຍໃນການທຳບາບພຣະເຈົ້າຈະລົງໂທດຜູ້ທີ່ບໍ່ຍອມກັບໃຈໃໝ່ແລະຫັນຫລັງໃຫ້ກັບຄວາມບາບ.

4. **<u>ຜູ້ຖືສາສນາກໍເປັນຄົນຫລົງເສັ່ງເໝືອນກັນ:</u>** ໂຣມ 3:9-10

ເຮົາບໍ່ຄວນໃຊ້ພຣະຄັມຂໍ້ນີ້ໄປຕັດສິນຄົນອື່ນ ພວກເຮົາຄວນຈະເຂົາໃຈວ່າພວກເຮົາເປັນຄົນບາບເໝືອນກັນປາສະຈາທ່ານໄປສູ່ຄຳຕອບທີ່ຖືກຕ້ອງ.

ອາຈານໂປໂລໄດ້ຖາມວ່າ" ພວກເຮົາມີຫຍັງດີລື່ນ? ຄຳຕອບ"ແມ່ນບໍ່ມີ " ອາຈານໂປໂລໄດ້ບອກວ່າການທຳດີນັ້ນບໍ່ໄດ້ມີຫຍັງລື່ນກັບຄົນທີ່ມີຄວາມບາບຫລາຍ ທັງໝົດກໍແມ່ນຫຼົງຫາຍນຳກັນໝົດ ໃນຄຳເວົ້າວ່າ "ພວກເຮົາ" ອາດໝາຍເຖິງຄົນຢິວຫຼືພວກເຮົາຜູ້ເປັນຄຣິສຕຽນ. ອາຈານໂປໂລສລຸບວ່າມະນຸດທຸກຄົນລວມທັງຄົນຢິວແລະຕ່າງຊາດແມ່ນຕົກຢູ່ໃນຄວາມບາບໝາຍຄວາມວ່າພວກເຮົາເປັນຄົນບາບທັງນັ້ນ. (ເພງສັຣເສີນ 14:1-3) ອາຈານໂປໂລ ໄດ້ບອກວ່າບໍ່ມີຜູ້ໄດ້ເວົ້າໄດ້ວ່າຕົນເປັນຄົນທີ່ມີຄຸນງາມຄວາມດີບໍ່ມີຈັກຄົນໃນພວກເຮົາ. ທຸກຄົນແມ່ນຕົກຢູ່ໃນຄວາມຜິດບາບແລະແມ່ນລໍຖ້າການຕັດສິນຂອງພຣະເຈົ້າ ຄວາມຫວັງຂອງພວກເຮົາກໍຄື ການກັບໃຈໃໝ່ເຊື່ອໃນພຣະເຢຊູຄຣິດເທົ່ານັ້ນ.ທ່ານຈະບອກຂ່າວນີ້ໃຫ້ກັບຜູ້ຢູ່ໃກ້ທ່ານແນວໃດ ?

## <u>ບົດຮຽນແຫ່ງຊີວິດ</u>

ມະນຸດທຸກຄົນເປັນຄົນບາບ ແລະຕ້ອງການຄວາມລອດພົ້ນມັນຈະມີອັນໃດເກີດຂຶ້ນເມື່ອເຂົາຮູ້ຈັກວ່າເຂົາເປັນຄົນ ບາບ ? ບາງຄົນບໍ່ກັບໃຈໃນຄວາມບາບແຕ່ກັບສະແດງຄວາມບາບຂອງຕົນກັບຄົນອື່ນບາງຄົນໄດ້ພະຍາຍາມດຳລົງຊີວິດໃນກົດລະບຽບຂອງສັງຄົມແລະກໍຄິດວ່າເຂົາເປັນຄົນດີ ຄົນສົນທັມ.ເຖິງຢ່າງໄດ້ກໍຕາມມະນຸດທຸກຄົນຮ່ວມທັງຜູ້ທີ່ຖືສາສນາແມ່ນຂາດຈາກຣັສມີຂອງພຣະເຈົ້າ.ປາສະຈາກພຣະເຢຊູຄຣິດແລ້ວແມ່ນຄົນຫລົງເສັ່ງທັງນັ້ນ. ເຮົາເດມີເງື່ອນໄຂແນວໃດ ? ໃນ ສີ່ຂໍ້ຕໍ່ໄປນີ້ແມ່ນຂໍ້ໃດທີ່ທ່ານຈຳມາພິຈາຣະນາແລະດ້ວຍເຫດຜົນໃດ ?

- ພວກເຮົາຮູ້ແລ້ວພຣະເຈົ້າບໍ່ພຽງແຕ່ມີຈິງແຕ່ຍັງເປັນພຣະເຈົ້າຜູ້ຊົງສ້າງ ດັ່ງນັ້ນພຣະເຈົ້າຈຶ່ງມີສິດວາງມາຕະຖານ ເພື່ອໃຫ້ເຮົາດຳລົງຊີວິດຕາມມາຕຖານນັ້ນ.
- ພວກເຮົາຄິດເອົາພຣະເຈົ້າຕາມມະໂນພາບຂອງເຮົາເອງແລະດຳລົງຊີວິດຕາມໃຈປາດຖນາເຮັດດັ່ງນັ້ນແລ້ວແມ່ນເຮົາຕົກຢູ່ໃນຄວາມບາບແລະທາງເຫີນຈາກພຣະເຈົ້າ.
- ພວກເຮົາຮູ້ວ່າຜົນການກະທຳຄວາມບາບເລື້ອຍໆ ແມ່ນຕົກຢູ່ໃນການຄວບຄຸມຂອງຄວາມບາບທີ່ເຮັດໃຫ້ພວກ ເຮົາເກີດຄວາມຊົມຊື່ນຍິນດີແລະກໍຊັກຊວນໃຫ້ຄົນອື່ນເຮັດອີກ.
- ພວກເຮົາສາມາດສາລະພາບໄດ້ເຖິງວ່າພວກເຮົາດີສ່ຳໄດ້ກໍຕາມເຮົາກໍເປັນຄົນບາບໃນສາຍພຣະເນດຂອງພຣະເຈົ້າ ເຮົາຕ້ອງການຜູ້ຊ່ອຍ.

**ອຸປຖັມໂດຍ ລາວຊາວເຫີນບັບຕິສສັມພັນ www.lsbf.org by SS**